ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ: /ທຫລ
ນະຄອນຫຼວງວຽງຈັນ, ວັນທີ

# ບົດສະເໜີ
## ຂອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
## ກ່ຽວກັບການປັບປຸງ ກົດໝາຍວ່າດ້ວຍຫຼັກຊັບ
## ຕໍ່ກອງປະຊຸມລັດຖະບານ, ຄັ້ງວັນທີ ..... ກໍລະກົດ 2019

**ຮຽນ:** - ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;
- ບັນດາທ່ານຮອງນາຍົກລັດຖະມົນຕີ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;
- ບັນດາທ່ານສະມາຊິກລັດຖະບານ ທີ່ເຄົາລົບ ແລະ ນັບຖື.

ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດສະເໜີ ກ່ຽວກັບການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012 ຕໍ່ກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈໍາເດືອນ ກໍລະກົດ ປີ2019 ເພື່ອພິຈາລະນາ ຊຶ່ງເນື້ອໃນຂອງບົດສະເໜີປະກອບດ້ວຍ 5 ເນື້ອໃນຕົ້ນຕໍ ດັ່ງນີ້:

I. ສະພາບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຫຼັກຊັບ ໃນໄລຍະຜ່ານມາ;
II. ເປົ້າໝາຍ, ເຫດຜົນ ແລະ ຄວາມຈໍາເປັນຂອງການປັບປຸງກົດໝາຍວ່າດ້ວຍຫຼັກຊັບ;
III. ໂຄງປະກອບ ແລະ ເນື້ອໃນຂອງບາງມາດຕາ ທີ່ມີຄວາມຈໍາເປັນໃນການປັບປຸງ;
IV. ຊັບພະຍາກອນ, ກົນໄກ ແລະ ວິທີການຈັດຕັ້ງປະຕິບັດ;
V. ຄາດຄະເນຜົນໄດ້ຮັບຈາກການປັບປຸງກົດໝາຍວ່າດ້ວຍຫຼັກຊັບ.

### I. ສະພາບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຫຼັກຊັບ ໃນໄລຍະຜ່ານມາ

ປີ 2010-2012 ພວກເຮົາໄດ້ປະກາດໃຊ້ ດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ. ທ້າຍປີ 2012 ພວກເຮົາໄດ້ຍົກດໍາລັດສະບັບດັ່ງກ່າວ ໃຫ້ເປັນກົດໝາຍວ່າດ້ວຍຫຼັກຊັບ ຊຶ່ງໄດ້ຮັບການຮັບຮອງ ຈາກສະພາແຫ່ງຊາດ ຕາມມະຕິຕົກລົງສະບັບເລກທີ 033/ສພຊ, ລົງວັນທີ 10 ທັນວາ 2012 ແລະ ປະທານປະເທດ ອອກລັດຖະດໍາລັດປະກາດໃຊ້ ສະບັບເລກທີ 027/ປປທ, ລົງວັນທີ 17 ມັງກອນ 2013. ກົດໝາຍສະບັບດັ່ງກ່າວ ໄດ້ກາຍເປັນເຄື່ອງມື ແລະ ບ່ອນອີງທີ່ສໍາຄັນ ໃຫ້ແກ່ການຄຸ້ມຄອງການເຄື່ອນໄຫວວຽກງານຫຼັກຊັບໃນຂົງເຂດທົ່ວປະເທດ.

ອີງໃສ່ນິຕິກໍາທີ່ໄດ້ກ່າວມາຂ້າງເທິງ ຕະຫຼາດຫຼັກຊັບລາວ ໄດ້ສ້າງຕັ້ງຂຶ້ນ ໃນເດືອນຕຸລາ ປີ 2010, ໄດ້ຮັບຮອງເອົາ ທະນາຄານດູແລຊັບສິນ ... ແຫ່ງ, ຮັບຮອງບໍລິສັດກວດສອບ ... ແຫ່ງ, ຮັບຮອງບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ..... ແຫ່ງ ແລະ ບໍລິສັດປະເມີນມູນຄ່າຊັບສິນ ..... ແຫ່ງ, ມີບໍລິສັດຫຼັກຊັບ ... ແຫ່ງ ທີ່ເຮັດໜ້າທີ່ກະກຽມຄວາມພ້ອມໃນການອອກຈໍາໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ແລະ ເປັນນາຍໜ້າຊື້-ຂາຍຫຼັກຊັບ, ມີ ... ບໍລິສັດ ທີ່ໄດ້ລະດົມທຶນຜ່ານຕະຫຼາດທຶນ,

ຊຶ່ງສາມາດລະດົມທຶນໄດ້ທັງໝົດ ..... ຕື້ກີບ ຫຼື ເທົ່າກັບ ..... % ຂອງ GDP, ມີມູນຄ່າຕະຫຼາດຮອດເດືອນ ກໍລະກົດ ປີ 2019 ທັງໝົດ ..... ກີບ ຫຼື ເທົ່າກັບ ..... ລ້ານໂດລາສະຫະລັດ. ມີຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາເຄື່ອນໄຫວຊື້-ຂາຍຫຼັກຊັບຫຼາຍພໍສົມຄວນ ໂດຍມີຈຳນວນບັນຊີຫຼັກຊັບທັງໝົດ ..... ບັນຊີ ຊຶ່ງ ໃນນັ້ນ ບັນຊີຫຼັກຊັບທີ່ເປັນຂອງຜູ້ລົງທຶນພາຍໃນກວມເອົາ ..... % ແລະ ຜູ້ລົງທຶນຕ່າງປະເທດ ກວມເອົາ ..... % ທີ່ມາຈາກ ..... ປະເທດທົ່ວໂລກ. ຖືໄດ້ວ່າຕະຫຼາດຫຼັກຊັບລາວ ເປັນທາງເລືອກໃໝ່ໃນການລະດົມທຶນໄລຍະຍາວ ໃຫ້ແກ່ຫົວໜ່ວຍວິສາຫະກິດ ແລະ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

ເຖິງຢ່າງໃດກໍຕາມ ໃນໄລຍະຜ່ານມາຍັງເຫັນວ່າ ບາງເນື້ອໃນຂອງກົດໝາຍວ່າດ້ວຍຫຼັກຊັບ ສະບັບປີ 2012 ຍັງບໍ່ທັນເປັນລະບົບຄົບຊຸດ ແລະ ບໍ່ສອດຄ່ອງກັບກົດໝາຍອື່ນ, ບາງເນື້ອໃນຍັງບໍ່ທັນຊັດເຈນ, ຮັດກຸມ ແລະ ບໍ່ແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ແລະ ການເຊື່ອມໂຍງກັບສາກົນ ເທົ່າທີ່ຄວນ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ແລະ ຮີບດ່ວນ ທີ່ຈະຕ້ອງປັບປຸງກົດໝາຍວ່າດ້ວຍຫຼັກຊັບ.

## II. ເປົ້າໝາຍ, ເຫດຜົນ ແລະ ຄວາມຈຳເປັນຂອງການປັບປຸງກົດໝາຍວ່າດ້ວຍຫຼັກຊັບ

ເຖິງວ່າກົດໝາຍວ່າດ້ວຍຫຼັກຊັບ ໃນໄລຍະຜ່ານມາໄດ້ເປັນບ່ອນອີງຢ່າງໜັກແໜ້ນໃຫ້ແກ່ ການຄຸ້ມຄອງ ການເຄື່ອນໄຫວວຽກງານຫຼັກຊັບກໍ່ຕາມ ແຕ່ຍັງເຫັນວ່າ ຍັງມີບາງເນື້ອໃນຂອງກົດໝາຍບໍ່ທັນສອດຄ່ອງກັບສະພາບ ການເຄື່ອນໄຫວວຽກງານຫຼັກຊັບເທົ່າທີ່ຄວນ ແລະ ຍັງມີຂໍ້ຈຳກັດຈຳນວນໜຶ່ງ ທີ່ບໍ່ສະໜັບສະໜູນໃຫ້ແກ່ການ ເຄື່ອນໄຫວວຽກງານຫຼັກຊັບ ດັ່ງລາຍລະອຽດລຸ່ມນີ້:

1. ການອະທິບາຍຄຳສັບ ຍັງບໍ່ທັນຈະແຈ້ງ ແລະ ຄົບຖ້ວນ;
2. ການອອກຈຳໜ່າຍຫຼັກຊັບ ຍັງປົນເປກັນ ໂດຍສະເພາະແມ່ນ ເງື່ອນໄຂ, ເອກະສານປະກອບ, ໜັງສືຊວນຊື້ ແລະ ການເປີດເຜີຍຂໍ້ມູນ ສຳລັບ ແຕ່ລະປະເພດຫຼັກຊັບ ແລະ ເປົ້າໝາຍຜູ້ລົງທຶນ ເຮັດໃຫ້ຜູ້ມີຄວາມ ສົນໃຈອອກຈຳໜ່າຍຫຼັກຊັບມີຄວາມຫຍຸ້ງຍາກໃນການກຽມຄວາມພ້ອມ;
3. ການຄຸ້ມຄອງບໍລິຫານກິດຈະການທີ່ດີ (CG) ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ໂດຍສະເພາະແມ່ນ ໂຄງປະກອບ ແລະ ເງື່ອນໄຂຂອງສະພາບໍລິຫານ (BOD), ການຄອບຄອງກິດຈະການ (Take over), ລາຍການທີ່ກ່ຽວພັນ (RPT) ແລະ ການໄດ້ມາ ແລະ ການເສຍໄປຂອງຊັບສິນ ຊຶ່ງເຫັນວ່າ ເປັນບັນຫາສຳຄັນທີ່ສຸດສຳລັບການຈົດທະບຽນ ແຕ່ຍັງບໍ່ທັນໄດ້ກຳນົດໄວ້ຈະແຈ້ງ ແລະ ຄົບຖ້ວນ ເທື່ອ;
4. ກອງທຶນສ່ວນບຸກຄົນ ເພື່ອຕອບສະໜອງຄວາມຕ້ອງການຕົວຈິງຂອງຜູ້ລົງທຶນ ຊຶ່ງຜ່ານມາກໍ່ມີຜູ້ທີ່ມີຄວາມ ສົນໃຈມາຂໍສ້າງຕັ້ງກອງທຶນປະເພດນີ້ ແຕ່ເຮົາບໍ່ທັນມີນິຕິກຳຮອງຮັບ. ກອງທຶນປະເພດນີ້ຈະລົງທຶນໃນ ທຸລະກິດໃດໜຶ່ງ ເມື່ອທຸລະກິດດັ່ງກ່າວເຂັ້ມແຂງແລ້ວ ຈະນຳບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ລວມທັງການອອກຈຳໜ່າຍໜ່ວຍລົງທຶນ ຊຶ່ງບັນຫານີ້ກໍ່ຍັງບໍ່ທັນໄດ້ກຳນົດໄວ້ເທື່ອ;
5. ສະຖາບັນສື່ກາງດ້ານຫຼັກຊັບຍັງບໍ່ທັນໄດ້ກຳນົດໄວ້ຢ່າງຄົບຖ້ວນ "ບໍລິສັດປະເມີນມູນຄ່າຊັບສິນ" ເພື່ອ ຮອງຮັບການອອກຈຳໜ່າຍຮຸ້ນກູ້ ເພື່ອເປັນການເພີ່ມຜະລິດຕະພັນໃນຕະຫຼາດຫຼັກຊັບລາວ ກໍ່ຍັງບໍ່ທັນໄດ້ ກ່າວເຖິງ;
6. ນັກວິຊາຊີບທຸລະກິດຫຼັກຊັບ ຊຶ່ງເປັນຜູ້ທີ່ມີຄວາມສຳຄັນທີ່ເຮັດໜ້າທີ່ໃນ ບໍລິສັດຫຼັກຊັບ ແລະ ບໍລິສັດ ບໍລິຫານກອງທຶນ ກໍ່ຍັງບໍ່ທັນໄດ້ກຳນົດພາລະບົດບາດໄວ້ຈະແຈ້ງເທື່ອ;
7. ຕະຫຼາດຫຼັກຊັບລາວ ຍັງເຮັດໜ້າທີ່ ທັງຊື້-ຂາຍ ແລະ ຮັບຝາກຫຼັກຊັບ ຊຶ່ງເຫັນວ່າຍັງບໍ່ຮັບປະກັນຄວາມ ສ່ຽງກໍລະນີຫາກປິດການດຳເນີນງານ ຈະເຮັດໃຫ້ບໍ່ສາມາດຊຳລະຫຼັກຊັບໄດ້. ນອກຈາກນີ້ ຖ້າແຍກສູນຮັບ ຝາກຫຼັກຊັບອອກຕ່າງຫາກ ລັດຖະບານສາມາດນຳເອົາພັນທະບັດຂອງຕົນໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ ໂດຍບໍ່ກັງວົນຕໍ່ການຮົ່ວໄຫຼຂອງຄວາມລັບ ຊຶ່ງວຽກງານດັ່ງກ່າວ ໄດ້ກຳນົດໄວ້ໃນແຜນຍຸດທະສາດການ ພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016-2025 ໂຄງການທີ 5 ແຜນງານທີ 5.2 ແມ່ນຕ້ອງ

ໄດ້ແຍກສູນຮັບຝາກອອກເປັນນິຕິບຸກຄົນໜຶ່ງ ພາຍໃນປີ 2018 ດັ່ງນັ້ນ, ໃນກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງນີ້ ຈຶ່ງໄດ້ກຳນົດແຍກເອົາສູນຮັບຝາກຫຼັກຊັບ ອອກໄປກຳນົດເປັນພາກໜຶ່ງສະເພາະຕ່າງຫາກ;

8. ອີງໃສ່ບົດຮຽນຂອງສາກົນ ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ ເປັນບັນຫາທີ່ມີຄວາມລະອຽດອ່ອນ ແລະ ສ້າງຜົນເສັຍຫາຍຫຼາຍທີ່ສຸດຕໍ່ຕະຫຼາດທຶນ ແຕ່ພວກເຮົາຍັງບໍ່ໄດ້ລະບຸຢ່າງຈະແຈ້ງໃນກົດໝາຍ ໂດຍສະເພາະແມ່ນ ການປັ່ນຕະຫຼາດ, ການນຳໃຊ້ຂໍ້ມູນພາຍໃນເພື່ອຊື້-ຂາຍຫຼັກຊັບ, ການຕົວະຍົວະຫຼອກລວງເພື່ອໃຫ້ຊື້-ຂາຍຫຼັກຊັບ, ການສ້າງ ສະໜອງ ຫຼື ເຜີຍແຜ່ ຂໍ້ມູນຂ່າວສານກ່ຽວກັບຫຼັກຊັບທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ, ການປອມແປງເອກະສານລາຍງານການເງິນ ແລະ ເອກະສານອື່ນທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ແລະ ການທຳລາຍ ເຊື່ອງອຳ ຂໍ້ມູນ, ເອກະສານ, ຂອງກາງ ແລະ ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນ. ຊຶ່ງເນື້ອໃນດັ່ງກ່າວເຫັນວ່າມີຄວາມສຳຄັນ ແລະ ເຫັນວ່າ ມີຄວາມຈຳເປັນທີ່ຈະຕ້ອງເພີ່ມພາກດັ່ງກ່າວນີ້ ເຂົ້າຕື່ມ;

9. ປັບປຸງບົດບັນຍັດກ່ຽວກັບ ການສືບສວນ-ສອບສວນຄະດີກ່ຽວກັບຫຼັກຊັບ ຄືນໃໝ່ ໂດຍໃຫ້ມີການປະສານສົມທົບກັນລະຫວ່າງ ພະນັກງານຈາກອົງການຄຸ້ມຄອງຫຼັກຊັບ ປະສານສົມທົບກັບ ພະນັກງານຈາກກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນກໍ່ໄດ້ ເພື່ອເປັນເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ ໃຫ້ມີປະສິດຕິພາບ ແລະ ສອດຄ່ອງກັບສະພາບການຕົວຈິງໃນປະຈຸບັນ;

10. ປັບປຸງເນື້ອໃນກ່ຽວກັບການພົວພັນສາກົນ ໂດຍກຳນົດໃຫ້ເປັນພາກໃໝ່ສະເພາະທີ່ກຳນົດຂອດ ການຮ່ວມມືສາກົນກ່ຽວກັບວຽກງານຫຼັກຊັບ ເພື່ອໃຫ້ມີເນື້ອໃນຈະແຈ້ງ ແລະ ຮັດກຸມ ເປັນບ່ອນອີງໃຫ້ແກ່ການພົວພັນຮ່ວມມືກັບພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານຫຼັກຊັບໃຫ້ມີປະສິດທິຜົນ ຊຶ່ງຮຽກຮ້ອງໃຫ້ ຄຄຊ ສປປ ລາວ ຕ້ອງເປັນສະມາຊິກ ອົງການຄຸ້ມຄອງຫຼັກຊັບສາກົນ (International Organization for Securities Commission: IOSCO) ເພື່ອໃຫ້ ຄຄຊ ມີເງື່ອນໄຂຈັດຕັ້ງປະຕິບັດໜ້າວຽກຕ່າງໆ ກ່ຽວກັບວຽກງານຕະຫຼາດທຶນ (ASEAN Capital Market Activities);

11. ປັບປຸງບົດບັນຍັດກ່ຽວກັບ ຂໍ້ຫ້າມ ຄືນໃໝ່ເພື່ອໃຫ້ຄົບຖ້ວນກວ່າເກົ່າ ລວມທັງ ຂໍ້ຫ້າມເກົ່າທີ່ມີຢູ່ແລ້ວ ແລະ ເພີ່ມຂໍ້ຫ້າມເຂົ້າໃໝ່ ຕໍ່ກັບ ສະຖາບັນສື່ກາງດ້ານຫຼັກຊັບ ທີ່ໄດ້ເພີ່ມເຂົ້າໃໝ່;

12. ປັບປຸງບົດບັນຍັດກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຄືນໃໝ່ ໂດຍໄດ້ຕັດເນື້ອໃນກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງໂດຍ ຄຄຊ ອອກ ແລ້ວມອບໃຫ້ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເຮັດໜ້າທີ່ແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບ ເພື່ອໃຫ້ການແກ້ໄຂຂໍ້ຂັດແຍ່ງ ມີປະສິດຕິພາບ ແລະ ສອດຄ່ອງກັບສະພາບການຕົວຈິງໃນປະຈຸບັນ;

13. ໄດ້ປັບປຸງບົດບັນຍັດການຄຸ້ມຄອງ ແລະ ການກວດກາວຽກງານຫຼັກຊັບ ເພື່ອໃຫ້ເນື້ອໃນໃຫ້ຄົບຖ້ວນຂຶ້ນກວ່າເກົ່າ ເປັນຕົ້ນແມ່ນ ສິດ ແລະ ໜ້າທີ່ຂອງ ຄຄຊ ແລະ ຈັນຍາບັນຂອງ ຄຄຊ ໄດ້ຮັບການປັບປຸງໃຫ້ຈະແຈ້ງ. ນອກຈາກນັ້ນ ໄດ້ເພີ່ມ 2 ຄະນະກຳມະການເຂົ້າໃສ່ຕື່ມ ຄື:
    1) ຄະນະກຳມະການພິຈາລະນາການອອກຈຳໜ່າຍຫຼັກຊັບ ເພື່ອຮັບປະກັນໃຫ້ມີການຄົ້ນຄວ້າການອອກຈຳໜ່າຍຫຼັກຊັບ ມີຄວາມລະອຽດ ຮອບຄອບ ແລະ ເລິກເຊິ່ງ ກ່ອນສະເໜີຕໍ່ ກອງປະຊຸມ ຄຄຊ ພິຈາລະນາ ເພື່ອຮັບປະກັນທາງດ້ານເວລາ, ຄວາມເປັນເອກະພາບ, ສ້າງຄວາມເຊື່ອໝັ້ນ, ໂປ່ງໃສ ແລະ ຍຸຕິທຳ ຂອງລະບົບຕະຫຼາດທຶນ;
    2) ຄະນະກຳມະການພິຈາລະນາມາດຕະການທາງບໍລິຫານ ເພື່ອກວດກາຄືນຜົນການກວດກາ ພ້ອມທັງພິຈາລະນາມາດຕາການທາງບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ແນໃສ່ເຮັດໃຫ້ການນຳໃຊ້ມາດຕະການສອດຄ່ອງກັບການລະເມີດ.

14. ມາດຕະການຕໍ່ຜູ້ລະເມີດ ໄດ້ປັບປຸງມາດຕະການປັບໃໝໃຫ້ຄົບຖ້ວນຂຶ້ນກວ່າເກົ່າ ນອກຈາກນັ້ນ ໄດ້ກຳນົດໃຫ້ພຶດຕິກຳຈຳນວນໜຶ່ງ ເປັນຕົ້ນ: ການປັ່ນຕະຫຼາດ, ການນຳໃຊ້ຂໍ້ມູນພາຍໃນເພື່ອການຊື້-ຂາຍຫຼັກຊັບ, ການຕົວະຍົວະຫຼອກລວງເພື່ອໃຫ້ຊື້-ຂາຍຫຼັກຊັບ ເປັນການກະທຳຜິດທາງອາຍາ.

## III. ໂຄງປະກອບ ແລະ ເນື້ອໃນຂອງບາງມາດຕາ ທີ່ມີຄວາມຈຳເປັນໃນການປັບປຸງ

ຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ປະກອບມີທັງໝົດ XVIII ພາກ, 14 ໝວດ ແລະ 234 ມາດຕາ ດັ່ງລາຍລະອຽດລຸ່ມນີ້:

### ພາກທີ I ບົດບັນຍັດທົ່ວໄປ (ປັບປຸງ)

ມາດຕາ 1 (ປັບປຸງ) ຈຸດປະສົງ
ມາດຕາ 2 (ປັບປຸງ) ຫຼັກຊັບ
ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ
ມາດຕາ 4 (ປັບປຸງ) ນະໂຍບາຍກ່ຽວກັບວຽກງານຫຼັກຊັບ
ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວວຽກງານຫຼັກຊັບ
ມາດຕາ 6 (ໃໝ່) ການປົກປ້ອງ
ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ
ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ

### ພາກທີ II ການອອກຈຳໜ່າຍຫຼັກຊັບ ແລະ ການເຄື່ອນໄຫວ ຂອງບໍລິ ສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ປັບປຸງ)

### ໝວດທີ 1 ການອອກຈຳໜ່າຍຮຸ້ນ (ປັບປຸງ)

ມາດຕາ 9 (ໃໝ່) ການອອກຈຳໜ່າຍຮຸ້ນ
ມາດຕາ 10 (ປັບປຸງ) ຈຸດປະສົງຂອງການອອກຈຳໜ່າຍຮຸ້ນ
ມາດຕາ 11 (ປັບປຸງ) ຮູບແບບການອອກຈາໜ່າຍຮຸ້ນ
ມາດຕາ 12 (ໃໝ່) ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ
ມາດຕາ 13 (ໃໝ່) ການອອກຈຳໜ່າຍຮຸ້ນໃນວົງຈຳກັດ
ມາດຕາ 14 (ໃໝ່) ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ

ມາດຕາ 15 (ປັບປຸງ) ເງື່ອນໄຂການອອກຈຳໜ່າຍຮຸ້ນ
ມາດຕາ 16 (ປັບປຸງ) ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນ
ມາດຕາ 17 (ປັບປຸງ) ເອກະສານລາຍງານການເງິນ
ມາດຕາ 18 (ປັບປຸງ) ໜັງສືຊວນຊື້
ມາດຕາ 19 (ປັບປຸງ) ສັນຍາຄ້ຳປະກັນການຈຳໜ່າຍຮຸ້ນ
ມາດຕາ 20 (ປັບປຸງ) ການພິຈາລະນາການຂໍອອກຈຳໜ່າຍຫຼັກຊັບ
ມາດຕາ 21 (ປັບປຸງ) ຂັ້ນຕອນການຈຳໜ່າຍຮຸ້ນ
ມາດຕາ 22 (ປັບປຸງ) ການລາຍງານ ແລະ ການຢັ້ງຢືນ ຜົນການຈຳໜ່າຍຮຸ້ນ
ມາດຕາ 23 (ປັບປຸງ) ການໂຈະ ແລະ ການຍົກເລີກ ການຈຳໜ່າຍຮຸ້ນ
ມາດຕາ 24 (ໃໝ່) ການນຳໃຊ້ທຶນທີ່ລະດົມໄດ້
ມາດຕາ 25 (ປັບປຸງ) ໃບຮຸ້ນ

## ໝວດທີ 2 ການອອກຈຳໜ່າຍຮຸ້ນກູ້ (ໃໝ່)

ມາດຕາ 26 (ໃໝ່) ການອອກຈຳໜ່າຍຮຸ້ນກູ້
ມາດຕາ 27 (ໃໝ່) ຈຸດປະສົງຂອງການອອກຈຳໜ່າຍຮຸ້ນກູ້
ມາດຕາ 28 (ໃໝ່) ຮູບແບບຂອງການອອກຈຳໜ່າຍຮຸ້ນກູ້
ມາດຕາ 29 (ໃໝ່) ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ
ມາດຕາ 30 (ໃໝ່) ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ
ມາດຕາ 31 (ໃໝ່) ເງື່ອນໄຂຂອງການອອກຈຳໜ່າຍຮຸ້ນກູ້
ມາດຕາ 32 (ໃໝ່) ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນກູ້
ມາດຕາ 33 (ໃໝ່) ໜັງສືຊວນຊື້
ມາດຕາ 34 (ໃໝ່) ຂັ້ນຕອນການຈຳໜ່າຍຮຸ້ນກູ້
ມາດຕາ 35 (ໃໝ່) ການລາຍງານ ແລະ ການຢັ້ງຢືນ ຜົນການຂາຍຮຸ້ນກູ້
ມາດຕາ 36 (ໃໝ່) ການນຳໃຊ້ທຶນທີ່ລະດົມໄດ້
ມາດຕາ 37 (ໃໝ່) ການນຳໃຊ້ບົດບັນຍັດຂອງການອອກຈຳໜ່າຍຮຸ້ນ

## ໝວດທີ 3 ການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ປັບປຸງ)

ມາດຕາ 38 (ປັບປຸງ) ການຄຸ້ມຄອງບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ
ມາດຕາ 39 (ປັບປຸງ) ການບັນຊີ ແລະ ກວດສອບ
ມາດຕາ 40 (ປັບປຸງ) ການຄອບຄອງກິດຈະການ
ມາດຕາ 41 (ປັບປຸງ) ລາຍການທີ່ກ່ຽວພັນ
ມາດຕາ 42 (ປັບປຸງ) ການໄດ້ມາ ແລະ ການໝົດໄປຂອງ ຊັບສິນ

## ພາກທີ III ກອງທຶນ (ປັບປຸງ)

## ໝວດທີ 1 ກອງທຶນຮ່ວມ (ປັບປຸງ)

มาดตา 43 (ปับปุງ) ກອງທຶນຮ່ວມ
ມາດຕາ 44 (ປັບປຸງ) ຫຼັກການ ການເຄື່ອນໄຫວຂອງກອງທຶນຮ່ວມ
ມາດຕາ 45 (ປັບປຸງ) ປະເພດກອງທຶນຮ່ວມ
ມາດຕາ 46 (ໃໝ່) ກອງທຶນຮ່ວມປິດ
ມາດຕາ 47 (ໃໝ່) ກອງທຶນຮ່ວມເປີດ
ມາດຕາ 48 (ປັບປຸງ) ການສ້າງຕັ້ງກອງທຶນຮ່ວມ
ມາດຕາ 49 (ໃໝ່) ຮູບແບບຂອງການເຄື່ອນໄຫວທຸລະກິດກອງທຶນຮ່ວມ
ມາດຕາ 50 (ປັບປຸງ) ເງື່ອນໄຂການສ້າງຕັ້ງກອງທຶນຮ່ວມ
ມາດຕາ 51 (ປັບປຸງ) ເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ
ມາດຕາ 52 (ປັບປຸງ) ໜັງສືຊວນຊື້ ສຳລັບການຂາຍໜ່ວຍລົງທຶນ
ມາດຕາ 53 (ປັບປຸງ) ການພິຈາລະນາເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ
ມາດຕາ 54 (ປັບປຸງ) ການຂຶ້ນທະບຽນເງິນທີ່ໄດ້ຈາກການຂາຍໜ່ວຍລົງທຶນ
ມາດຕາ 55 (ປັບປຸງ) ເປົ້າໝາຍລົງທຶນຂອງກອງທຶນຮ່ວມ
ມາດຕາ 56 (ປັບປຸງ) ກອງປະຊຸມຜູ້ຖືໜ່ວຍລົງທຶນ
ມາດຕາ 57 (ໃໝ່) ເນື້ອໃນອື່ນກ່ຽວກັບກອງທຶນຮ່ວມ

## ໝວດທີ 2 ກອງທຶນພັດທະນາໂຄງລ່າງພື້ນຖານ (ໃໝ່)

ມາດຕາ 58 (ໃໝ່) ກອງທຶນພັດທະນາໂຄງລ່າງພື້ນຖານ
ມາດຕາ 59 (ໃໝ່) ຮູບແບບຂອງການສ້າງຕັ້ງກອງທຶນພັດທະນາໂຄງລ່າງພື້ນຖານ
ມາດຕາ 60 (ໃໝ່) ເປົ້າໝາຍການລົງທຶນຂອງກອງທຶນພັດທະນາໂຄງລ່າງພື້ນຖານ
ມາດຕາ 61 (ໃໝ່) ການນຳໃຊ້ບັດບັນຍັດຂອງກອງທຶນຮ່ວມ
ມາດຕາ 62 (ໃໝ່) ເນື້ອໃນອື່ນກ່ຽວກັບກອງທຶນພັດທະນາໂຄງລ່າງພື້ນຖານ

## ໝວດທີ 3 ກອງທຶນສ່ວນບຸກຄົນ (ໃໝ່)

ມາດຕາ 63 (ໃໝ່) ກອງທຶນສ່ວນບຸກຄົນ
ມາດຕາ 64 (ໃໝ່) ຫຼັກການ ການເຄື່ອນໄຫວຂອງກອງທຶນສ່ວນບຸກຄົນ
ມາດຕາ 65 (ໃໝ່) ການສ້າງຕັ້ງກອງທຶນສ່ວນບຸກຄົນ
ມາດຕາ 66 (ໃໝ່) ເງື່ອນໄຂການຂໍອະນຸຍາດສ້າງຕັ້ງກອງທຶນສ່ວນບຸກຄົນ
ມາດຕາ 67 (ໃໝ່) ເປົ້າໝາຍລົງທຶນຂອງກອງທຶນສ່ວນບຸກຄົນ

## ໝວດທີ 4 ກອງທຶນປະເພດອື່ນ (ໃໝ່)

ມາດຕາ 68 (ໃໝ່) ກອງທຶນປະເພດອື່ນ
ມາດຕາ 69 (ໃໝ່) ເງື່ອນໄຂການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນປະເພດອື່ນ

# ພາກທີ IV ສະຖາບັນສື່ກາງດ້ານຫຼັກຊັບ (ປັບປຸງ)

## ໝວດທີ 1 ບໍລິສັດຫຼັກຊັບ (ປັບປຸງ)

ມາດຕາ 70 (ໃໝ່) ບໍລິສັດຫຼັກຊັບ
ມາດຕາ 71 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດຂອງບໍລິສັດຫຼັກຊັບ
ມາດຕາ 72 (ປັບປຸງ) ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດບໍລິສັດຫຼັກຊັບ
ມາດຕາ 73 (ປັບປຸງ) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດບໍລິສັດຫຼັກຊັບ
ມາດຕາ 74 (ປັບປຸງ) ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດບໍລິສັດຫຼັກຊັບ
ມາດຕາ 75 (ປັບປຸງ) ການສ້າງຕັ້ງສາຂາ ແລະ ໜ່ວຍບໍລິການ ຂອງບໍລິສັດຫຼັກຊັບພາຍໃນ ແລະ ຕ່າງປະເທດ
ມາດຕາ 76 (ປັບປຸງ) ການສ້າງຕັ້ງ ຫ້ອງການຜູ້ຕາງໜ້າ ຂອງບໍລິສັດຫຼັກຊັບຕ່າງປະເທດ
ມາດຕາ 77 (ປັບປຸງ) ການຖອກ ແລະ ການນຳໃຊ້ທຶນຈົດທະບຽນຂອງບໍລິສັດຫຼັກຊັບ
ມາດຕາ 78 (ປັບປຸງ) ການປະກາດໃຫ້ມອບຊັບສິນ
ມາດຕາ 79 (ປັບປຸງ) ໂຄງປະກອບການຈັດຕັ້ງຂອງບໍລິສັດຫຼັກຊັບ
ມາດຕາ 80 (ປັບປຸງ) ກິດລະບຽບຂອງບໍລິສັດຫຼັກຊັບ
ມາດຕາ 81 (ປັບປຸງ) ຂອບເຂດການດຳເນີນທຸລະກິດຂອງບໍລິສັດຫຼັກຊັບ
ມາດຕາ 82 (ປັບປຸງ) ການປ່ຽນແປງການດຳເນີນທຸລະກິດຫຼັກຊັບ
ມາດຕາ 83 ອັດຕາສ່ວນຄວາມພຽງພໍຂອງທຶນ
ມາດຕາ 84 (ປັບປຸງ) ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ
ມາດຕາ 85 (ປັບປຸງ) ການປ່ຽນແປງລາຍການຂອງບໍລິສັດຫຼັກຊັບ
ມາດຕາ 86 (ປັບປຸງ) ລະບອບບັນຊີຂອງບໍລິສັດຫຼັກຊັບ
ມາດຕາ 87 (ໃໝ່) ການໂຈະການດຳເນີນທຸລະກິດຂອງບໍລິສັດຫຼັກຊັບ
ມາດຕາ 88 (ປັບປຸງ) ການຖອນໃບອະນຸຍາດດຳເນີນທຸລະກິດຂອງບໍລິສັດຫຼັກຊັບ
ມາດຕາ 89 (ປັບປຸງ) ການປະຕິບັດພາຍຫຼັງຖືກຖອນໃບອະນຸຍາດດຳເນີນທຸລະກິດ

## ໝວດທີ 2 ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ (ປັບປຸງ)

ມາດຕາ 90 (ໃໝ່) ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 91 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 92 (ປັບປຸງ) ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 93 (ປັບປຸງ) ຂອບເຂດການດຳເນີນທຸລະກິດຂອງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 94 (ປັບປຸງ) ສິດ ແລະ ໜ້າທີ່ ຂອງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 95 (ໃໝ່) ການໂຈະການດຳເນີນທຸລະກິດຂອງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 96 (ໃໝ່) ການຖອນໃບອະຍຸຍາດດຳເນີນທຸລະກິດຂອງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ
ມາດຕາ 97 (ໃໝ່) ການປະຕິບັດພາຍຫຼັງຖືກຖອນໃບອະນຸຍາດດຳເນີນທຸລະກິດຂອງບໍລິສັດບໍລິຫານກອງທຶນ ເພື່ອການລົງທຶນ
ມາດຕາ 98 (ປັບປຸງ) ການນຳໃຊ້ບົດບັນຍັດຂອງບໍລິສັດຫຼັກຊັບ

## ໝວດທີ 3 ບໍລິສັດປະເມີນມູນຄ່າຊັບສິນ (ໃໝ່)

ມາດຕາ 99 (ໃໝ່) ບໍລິສັດປະເມີນມູນຄ່າຊັບສິນ
ມາດຕາ 100 (ໃໝ່) ການຮັບຮອງໃຫ້ການບໍລິການປະເມີນມູນຄ່າຊັບສິນ
ມາດຕາ 101 (ໃໝ່) ເງື່ອນໄຂການຮັບຮອງໃຫ້ການບໍລິການປະເມີນມູນຄ່າຊັບສິນ
ມາດຕາ 102 (ໃໝ່) ເອກະສານປະກອບການຮັບຮອງໃຫ້ການບໍລິການປະເມີນມູນຄ່າຊັບສິນ

ມາດຕາ 103 (ໃໝ່) ການພິຈາລະນາການຂໍຮັບຮອງໃຫ້ການບໍລິການປະເມີນມູນຄ່າຊັບສິນ
ມາດຕາ 104 (ໃໝ່) ປະເພດຂອງການໃຫ້ບໍລິການປະເມີນມູນຄ່າຊັບສິນ
ມາດຕາ 105 (ໃໝ່) ສິດ ແລະ ໜ້າທີ່ຂອງບໍລິສັດປະເມີນມູນຄ່າຊັບສິນ
ມາດຕາ 106 (ໃໝ່) ການໂຈະການຮັບຮອງການໃຫ້ບໍລິການປະເມີນມູນຄ່າຊັບສິນ
ມາດຕາ 107 (ໃໝ່) ການຖອນໃບຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນ

## ໝວດທີ 4 ທະນາຄານດູແລຊັບສິນ (ປັບປຸງ)

ມາດຕາ 108 (ໃໝ່) ທະນາຄານດູແລຊັບສິນ
ມາດຕາ 109 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດເປັນທະນາຄານດູແລຊັບສິນ
ມາດຕາ 110 (ປັບປຸງ) ເງື່ອນໄຂການຮັບຮອງເປັນທະນາຄານດູແລຊັບສິນ
ມາດຕາ 111 (ປັບປຸງ) ເອກະສານປະກອບການຮັບຮອງເປັນທະນາຄານດູແລຊັບສິນ
ມາດຕາ 112 (ປັບປຸງ) ການພິຈາລະນາການຂໍຮັບຮອງເປັນທະນາຄານດູແລຊັບສິນ
ມາດຕາ 113 (ປັບປຸງ) ຂອບເຂດການເຄື່ອນໄຫວທຸລະກິດຂອງທະນາຄານດູແລຊັບສິນ
ມາດຕາ 114 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ
ມາດຕາ 115 (ປັບປຸງ) ການໂຈະການຮັບຮອງການເຄື່ອນໄຫວທຸລະກິດຂອງທະນາຄານດູແລຊັບສິນ
ມາດຕາ 116 (ປັບປຸງ) ການຖອນໃບຮັບຮອງເປັນທະນາຄານດູແລຊັບສິນ

## ໝວດທີ 5 ບໍລິສັດກວດສອບ (ປັບປຸງ)

ມາດຕາ 117 (ໃໝ່) ບໍລິສັດກວດສອບ
ມາດຕາ 118 (ປັບປຸງ) ການຮັບຮອງໃຫ້ການບໍລິການກວດສອບ
ມາດຕາ 119 (ປັບປຸງ) ເງື່ອນໄຂການຮັບຮອງໃຫ້ການບໍລິການກວດສອບ
ມາດຕາ 120 (ປັບປຸງ) ເອກະສານປະກອບການຮັບຮອງໃຫ້ການບໍລິການກວດສອບ
ມາດຕາ 121 (ປັບປຸງ) ການພິຈາລະນາການຂໍຮັບຮອງໃຫ້ການບໍລິການກວດສອບ
ມາດຕາ 122 (ໃໝ່) ຂອບເຂດການໃຫ້ບໍລິການກວດສອບ
ມາດຕາ 123 (ປັບປຸງ) ສິດ ແລະ ໜ້າທີ່ ຂອງບໍລິສັດກວດສອບ
ມາດຕາ 124 (ປັບປຸງ) ການໂຈະການຮັບຮອງການໃຫ້ບໍລິການກວດສອບ
ມາດຕາ 125 (ປັບປຸງ) ການຖອນໃບຮັບຮອງເປັນບໍລິສັດກວດສອບ

## ໝວດທີ 6 ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື (ປັບປຸງ)

ມາດຕາ 126 (ໃໝ່) ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 127 (ໃໝ່) ການຮັບຮອງໃຫ້ການບໍລິການຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 128 (ໃໝ່) ເງື່ອນໄຂການຮັບຮອງໃຫ້ການບໍລິການຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 129 (ໃໝ່) ເອກະສານປະກອບການຮັບຮອງໃຫ້ການບໍລິການຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 130 (ໃໝ່) ການພິຈາລະນາການຂໍຮັບຮອງໃຫ້ການບໍລິການຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 131 (ປັບປຸງ) ຂອບເຂດການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 132 (ໃໝ່) ສິດ ແລະ ໜ້າທີ່ ຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 133 (ໃໝ່) ການໂຈະການຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 134 (ໃໝ່) ການຖອນໃບຮັບຮອງເປັນບໍລິສັດຈັດລຳດັບຄວາມໜ້າເຊື່ອຖື

## ພາກທີ V ນັກວິຊາຊີບທຸລະກິດຫຼັກຊັບ (ໃໝ່)

ມາດຕາ 135 (ໃໝ່) ນັກວິຊາຊີບທຸລະກິດຫຼັກຊັບ

ມາດຕາ 136 (ໃໝ່) ປະເພດຂອງນັກວິຊາຊີບທຸລະກິດຫຼັກຊັບ

ມາດຕາ 137 (ໃໝ່) ການສະເໜີຂໍເປັນນັກວິຊາຊີບທຸລະກິດຫຼັກຊັບ

## ພາກທີ VI ສະມາຄົມທຸລະກິດຫຼັກຊັບ (ໃໝ່)

ມາດຕາ 138 (ປັບປຸງ) ສະມາຄົມທຸລະກິດຫຼັກຊັບ

ມາດຕາ 139 (ໃໝ່) ການສ້າງຕັ້ງສະມາຄົມທຸລະກິດຫຼັກຊັບ

ມາດຕາ 140 (ໃໝ່) ຂອບເຂດການເຄື່ອນໄຫວທຸລະກິດຂອງສະມາຄົມທຸລະກິດຫຼັກຊັບ

ມາດຕາ 141 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດຫຼັກຊັບ

## ພາກທີ VII ຕະຫຼາດຫຼັກຊັບ (ປັບປຸງ)

ມາດຕາ 142 (ໃໝ່) ຕະຫຼາດຫຼັກຊັບ

ມາດຕາ 143 (ປັບປຸງ) ການອະນຸຍາດດຳເນີນທຸລະກິດຕະຫຼາດຫຼັກຊັບ

ມາດຕາ 144 (ປັບປຸງ) ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດຕະຫຼາດຫຼັກຊັບ

ມາດຕາ 145 (ປັບປຸງ) ເອກະສານປະກອບການອະນຸຍາດດຳເນີນທຸລະກິດຕະຫຼາດຫຼັກຊັບ

ມາດຕາ 146 (ປັບປຸງ) ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດຕະຫຼາດຫຼັກຊັບ

ມາດຕາ 147 (ປັບປຸງ) ການຖອກ ແລະ ການນຳໃຊ້ທຶນຈົດທະບຽນຂອງຕະຫຼາດຫຼັກຊັບ

ມາດຕາ 148 (ໃໝ່) ການປະກາດໃຫ້ມວນຊົນຊາບ

ມາດຕາ 149 (ປັບປຸງ) ໂຄງປະກອບການຈັດຕັ້ງຂອງຕະຫຼາດຫຼັກຊັບ

ມາດຕາ 150 (ປັບປຸງ) ກົດລະບຽບຂອງຕະຫຼາດຫຼັກຊັບ

ມາດຕາ 151 (ປັບປຸງ) ຂອບເຂດການດຳເນີນທຸລະກິດຂອງຕະຫຼາດຫຼັກຊັບ

ມາດຕາ 152 (ໃໝ່) ການປ່ຽນແປງການດຳເນີນທຸລະກິດຂອງຕະຫຼາດຫຼັກຊັບ

ມາດຕາ 153 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບ

ມາດຕາ 154 (ປັບປຸງ) ສະມາຊິກຂອງຕະຫຼາດຫຼັກຊັບ

## ພາກທີ VIII ສູນຮັບຝາກຫຼັກຊັບ (ໃໝ່)

ມາດຕາ 155 (ໃໝ່) ສູນຮັບຝາກຫຼັກຊັບ

ມາດຕາ 156 (ໃໝ່) ການອະນຸຍາດດຳເນີນທຸລະກິດສູນຮັບຝາກຫຼັກຊັບ

ມາດຕາ 157 (ໃໝ່) ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດສູນຮັບຝາກຫຼັກຊັບ

ມາດຕາ 158 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດສູນຮັບຝາກຫຼັກຊັບ

ມາດຕາ 159 (ໃໝ່) ການພິຈາລະນາການຂໍອະນຸຍາດດຳເນີນທຸລະກິດສູນຮັບຝາກຫຼັກຊັບ

ມາດຕາ 160 (ໃໝ່) ການຖອກ ແລະ ການນຳໃຊ້ທຶນຈົດທະບຽນຂອງສູນຮັບຝາກຫຼັກຊັບ

ມາດຕາ 161 (ໃໝ່) ການປະກາດໃຫ້ມອບຊັບຊາບ
ມາດຕາ 162 (ໃໝ່) ໂຄງປະກອບການຈັດຕັ້ງຂອງສູນຮັບຝາກຫຼັກຊັບ
ມາດຕາ 163 (ໃໝ່) ກົດລະບຽບຂອງສູນຮັບຝາກຫຼັກຊັບ
ມາດຕາ 164 (ປັບປຸງ) ຂອບເຂດການດຳເນີນທຸລະກິດຂອງສູນຮັບຝາກຫຼັກຊັບ
ມາດຕາ 165 (ໃໝ່) ການປ່ຽນແປງການດຳເນີນທຸລະກິດຂອງສູນຮັບຝາກຫຼັກຊັບ
ມາດຕາ 166 (ໃໝ່) ສິດ ແລະ ໜ້າທີ່ຂອງສູນຮັບຝາກຫຼັກຊັບ
ມາດຕາ 167 (ປັບປຸງ) ສະມາຊິກຂອງສູນຮັບຝາກຫຼັກຊັບ

## ພາກທີ IX ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ (ໃໝ່)

ມາດຕາ 168 (ໃໝ່) ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ
ມາດຕາ 169 (ໃໝ່) ການປັ່ນຕະຫຼາດ
ມາດຕາ 170 (ໃໝ່) ການນຳໃຊ້ຂໍ້ມູນພາຍໃນເພື່ອຊື້-ຂາຍຫຼັກຊັບ
ມາດຕາ 171 (ໃໝ່) ການຕົວະຍົວະຫຼອກລວງເພື່ອໃຫ້ຊື້-ຂາຍຫຼັກຊັບ
ມາດຕາ 172 (ໃໝ່) ການສ້າງ, ສະໜອງ ຫຼື ເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງ
ມາດຕາ 173 (ໃໝ່) ການປອມແປງເອກະສານລາຍງານການເງິນ ແລະ ເອກະສານອື່ນທີ່ກ່ຽວ ຂ້ອງໃນຂົງເຂດວຽກງານຫຼັກຊັບ
ມາດຕາ 174 (ໃໝ່) ການທຳລາຍ, ເຊື່ອງອຳຂໍ້ມູນ, ເອກະສານ, ຫຼັກຖານ ແລະ ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນ

## ພາກທີ X ການລາຍງານ, ການເປີດເຜີຍ ແລະ ການເກັບຮັກສາຂໍ້ມູນ (ປັບປຸງ)

ມາດຕາ 175 (ປັບປຸງ) ການລາຍງານ
ມາດຕາ 176 (ປັບປຸງ) ການເປີດເຜີຍຂໍ້ມູນ
ມາດຕາ 177 (ປັບປຸງ) ການລາຍງານຂໍ້ມູນຂອງບຸກຄົນພາຍໃນ
ມາດຕາ 178 (ປັບປຸງ) ການເກັບຮັກສາຂໍ້ມູນ

## ພາກທີ XI ການສືບສວນ-ສອບສວນຄະດີກ່ຽວກັບວຽກງານຫຼັກຊັບຫຼັກຊັບ (ປັບປຸງ)

ມາດຕາ 179 (ປັບປຸງ) ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນຄະດີກ່ຽວກັບວຽກງານຫຼັກຊັບ
ມາດຕາ 180 (ປັບປຸງ) ຂັ້ນຕອນການສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ
ມາດຕາ 181 (ປັບປຸງ) ການອອກຄຳສັ່ງເປີດການສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ
ມາດຕາ 182 (ໃໝ່) ການອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ
ມາດຕາ 183 (ປັບປຸງ) ການດຳເນີນການສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ
ມາດຕາ 184 (ປັບປຸງ) ກຳນົດເວລາການສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ
ມາດຕາ 185 (ປັບປຸງ) ການສິ້ນສຸດການສືບສວນ-ສອບສວນ ແລະ ການປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ
ມາດຕາ 186 (ປັບປຸງ) ເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ
ມາດຕາ 187 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ສືບສວນ-ສອບສວນກ່ຽວກັບວຽກງານຫຼັກຊັບ

## ພາກທີ XII ການຮ່ວມມືສາກົນກ່ຽວກັບວຽກງານຫຼັກຊັບ (ໃໝ່)

ມາດຕາ 188 (ໃໝ່) ຫຼັກການຮ່ວມມືສາກົນ
ມາດຕາ 189 (ໃໝ່) ເງື່ອນໄຂການຮ່ວມມືສາກົນ
ມາດຕາ 190 (ໃໝ່) ການຮ້ອງຂໍ ຫຼື ສະໜອງ ຂໍ້ມູນຊຶ່ງກັນ ແລະ ກັນ
ມາດຕາ 191 (ໃໝ່) ການນຳໃຊ້ຂໍ້ມູນ-ຂ່າວສານ
ມາດຕາ 192 (ໃໝ່) ການຮັກສາຄວາມລັບ
ມາດຕາ 193 (ໃໝ່) ການປະຕິເສດການຮ້ອງຂໍ

## ພາກທີ XIII ຂໍ້ຫ້າມ (ປັບປຸງ)

ມາດຕາ 194 (ປັບປຸງ) ຂໍ້ຫ້າມທົ່ວໄປ
ມາດຕາ 195 (ປັບປຸງ) ຂໍ້ຫ້າມສຳລັບການອອກຈຳໜ່າຍຫຼັກຊັບ
ມາດຕາ 196 (ປັບປຸງ) ຂໍ້ຫ້າມສຳລັບບໍລິສັດຫຼັກຊັບ
ມາດຕາ 197 (ປັບປຸງ) ຂໍ້ຫ້າມສຳລັບບໍລິສັດບໍລິຫານກອງທຶນ
ມາດຕາ 198 (ໃໝ່) ຂໍ້ຫ້າມສຳລັບບໍລິສັດປະເມີນມູນຄ່າຊັບສິນ
ມາດຕາ 199 (ປັບປຸງ) ຂໍ້ຫ້າມສາລັບທະນາຄານດູແລຊັບສິນ
ມາດຕາ 200 (ປັບປຸງ) ຂໍ້ຫ້າມສຳລັບບໍລິສັດກວດສອບ
ມາດຕາ 201 (ໃໝ່) ຂໍ້ຫ້າມສຳລັບບໍລິສັດຈັດລຳດັບຄວາມໜ້າເຊື່ອຖື
ມາດຕາ 202 (ໃໝ່) ຂໍ້ຫ້າມສຳລັບນັກວິຊາຊີບທຸລະກິດຫຼັກຊັບ
ມາດຕາ 203 (ປັບປຸງ) ຂໍ້ຫ້າມສຳລັບຕະຫຼາດຫຼັກຊັບ
ມາດຕາ 204 (ໃໝ່) ຂໍ້ຫ້າມສຳລັບສູນຮັບຝາກຫຼັກຊັບ
ມາດຕາ 205 (ໃໝ່) ຂໍ້ຫ້າມສຳລັບສະມາຄົມທຸລະກິດຫຼັກຊັບ
ມາດຕາ 206 (ປັບປຸງ) ຂໍ້ຫ້າມສຳລັບ ຄະນະ ຄຄຊ ແລະ ພະນັກງານຂອງ ສຄຄຊ

## ພາກທີ XIV ການແກ້ໄຂຂໍ້ຂັດແຍ່ງ (ປັບປຸງ)

ມາດຕາ 207 (ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບ
ມາດຕາ 208 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບດ້ວຍການປະນີປະນອມ
ມາດຕາ 209 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບໂດຍ ສູນ ຫຼື ຫ້ອງການ ແກ້ໄຂ້ຂໍ້ຂັດແຍ່ງ ທາງດ້ານເສດຖະກິດ
ມາດຕາ 210 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບໂດຍສານປະຊາຊົນ
ມາດຕາ 211 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບທີ່ມີລັກສະນະສາກົນ

## ພາກທີ XV ການຄຸ້ມຄອງ ແລະ ກວດກາ ວຽກງານຫຼັກຊັບ (ປັບປຸງ)

### ໝວດທີ 1 ການຄຸ້ມຄອງວຽກງານຫຼັກຊັບ (ປັບປຸງ)

ມາດຕາ 212 (ປັບປຸງ) ອົງການຄຸ້ມຄອງວຽກງານຫຼັກຊັບ
ມາດຕາ 213 (ປັບປຸງ) ໂຄງປະກອບການຈັດຕັ້ງຂອງ ຄຄຊ
ມາດຕາ 214 (ໃໝ່) ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ແລະ ອາຍຸການຂອງ ຄຄຊ
ມາດຕາ 215 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ຄຄຊ
ມາດຕາ 216 (ໃໝ່) ຄະນະກຳມະການຄົ້ນຄວ້າການອອກຈຳໜ່າຍຫຼັກຊັບ
ມາດຕາ 217 (ໃໝ່) ຄະນະກຳມະການພິຈາລະນາມາດຕະການລົງໂທດທາງບໍລິຫານ

ມາດຕາ 218 (ໃໝ່) ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ມາດຕາ 219 (ປັບປຸງ) ລະບອບແບບແຜນວິທີເຮັດວຽກຂອງ ຄຄຊ
ມາດຕາ 220 (ໃໝ່) ຈັນຍາບັນຂອງ ຄະນະ ຄຄຊ ແລະ ພະນັກງານ ສຄຄຊ

### ໝວດທີ 2 ການກວດກາວຽກງານຫຼັກຊັບ (ປັບປຸງ)

ມາດຕາ 221 (ປັບປຸງ) ອົງການກວດກາວຽກງານຫຼັກຊັບ
ມາດຕາ 222 (ປັບປຸງ) ເປົ້າໝາຍກວດກາ
ມາດຕາ 223 (ປັບປຸງ) ເນື້ອໃນການກວດກາ
ມາດຕາ 224 (ປັບປຸງ) ຮູບການຂອງການກວດກາ
ມາດຕາ 225 (ປັບປຸງ) ຄະນະກວດກາ
ມາດຕາ 226 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກວດກາ
ມາດຕາ 227 (ປັບປຸງ) ພັນທະຂອງເປົ້າໝາຍການກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ

### ພາກທີ XVI ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບຂອງອົງການຄຸ້ມຄອງວຽກງານຫຼັກຊັບ

ມາດຕາ 228 ງົບປະມານ
ມາດຕາ 229 ເຄື່ອງໝາຍ ແລະ ຕາປະທັບຂອງອົງການຄຸ້ມຄອງວຽກງານຫຼັກຊັບ

### ພາກທີ XVII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)

ມາດຕາ 230 ນະໂຍບາຍຕໍ່ຜູ້ມີຜົນງານ
ມາດຕາ 231 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ
ມາດຕາ 232 (ປັບປຸງ) ມາດຕະການສຶກສາອົບຮົມ
ມາດຕາ 233 (ປັບປຸງ) ມາດຕະການທາງວິໄນ
ມາດຕາ 234 (ປັບປຸງ) ມາດຕະການປັບໃໝ
ມາດຕາ 235 (ປັບປຸງ) ມາດຕະການທາງແພ່ງ
ມາດຕາ 236 (ປັບປຸງ) ມາດຕະການທາງອາຍາ
ມາດຕາ 237 (ປັບປຸງ) ມາດຕະການໂທດເພີ່ມ

### ພາກທີ XVIII ບົດບັນຍັດສຸດທ້າຍ (ປັບປຸງ)

ມາດຕາ 238 ການຈັດຕັ້ງປະຕິບັດ
ມາດຕາ 239 (ປັບປຸງ) ຜົນສັກສິດ

## IV. ຊັບພະຍາກອນ, ກົນໄກ ແລະ ອົງການຈັດຕັ້ງປະຕິບັດ

ພວກເຮົາ ມີຄວາມພ້ອມໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ເນື່ອງຈາກວ່າ:

1. ມີຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຊຶ່ງມີຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນເປັນປະທານ ແລະ ມີ ລັດຖະມົນຕີ, ຮອງລັດຖະມົນຕີ ຈາກກະຊວງກ່ຽວຂ້ອງເປັນຄະນະ. ພ້ອມນີ້ ຍັງມີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ເຮັດໜ້າທີ່ເປັນເສນາທິການໃຫ້ແກ່ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ແລະ ມີແບບແຜນວິທີເຮັດວຽກທີ່ຄ່ອງຕົວ;
2. ມີລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ແລະ ຂ່າວສານ ຢ່າງເປັນລະບົບຄົບຊຸດ ເພື່ອໃຫ້ບໍລິການລູກຄ້າ;

3. ຕ້ອງສ້າງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບໃຫ້ຄົບຖ້ວນ ເພື່ອຈັດຕັ້ງຜັນຂະຫຍາຍກົດໝາຍສະບັບດັ່ງກ່າວ. ພ້ອມນີ້ ຈະໄດ້ຄົ້ນຄ້ວາປັບປຸງຄືນ ບັນດານິຕິກຳທີ່ມີແລ້ວ ຈຳນວນ 45 ສະບັບ ໃຫ້ສອດຄ່ອງກັບກົດໝາຍສະບັບນີ້;
4. ພາຍຫຼັງກົດໝາຍສະບັບນີ້ຖືກປະກາດໃຊ້ຢ່າງເປັນທາງການ ຕ້ອງໂຄສະນາ ເຜີຍແຜ່ ໃຫ້ແກ່ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ມວນຊົນທົ່ວໄປ ໃຫ້ຮັບຮູ້ ແລະ ເຂົ້າໃຈເນື້ອໃນຂອງກົດໝາຍ ພ້ອມທັງຂຶ້ນແຜນຈັດຕັ້ງປະຕິບັດ ແຕ່ລະໜ້າວຽກທີ່ໄດ້ລະບຸໄວ້ໃນກົດໝາຍສະບັບນີ້.

## V. ຄາດຄະເນຜົນໄດ້ຮັບຈາກການປັບປຸງກົດໝາຍວ່າດ້ວຍຫຼັກຊັບ

ພາຍຫຼັງກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ຖືກຮັບຮອງ ແລະ ປະກາດໃຊ້ ຄາດຄະເນວ່າຈະໄດ້ຮັບຜົນດີຫຼາຍດ້ານ ຄື:

1. ອົງການຄຸ້ມຄອງວຽກງານຫຼັກຊັບ ຈະມີກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ທີ່ມີເນື້ອໃນທີ່ຄົບຖ້ວນ, ສົມບູນ, ຮັດກຸມ ແລະ ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບສະພາບການເຄື່ອນໄຫວວຽກງານຫຼັກຊັບຫຼາຍຂຶ້ນກວ່າເກົ່າ ພ້ອມທັງ ກາຍເປັນເຄື່ອງມືທີ່ສຳຄັນ ແລະ ໜັກແໜ້ນກວ່າເກົ່າ ໃຫ້ແກ່ອົງການຄຸ້ມຄອງວຽກງານຫຼັກຊັບໃນການຄຸ້ມຄອງ, ຕິດຕາມ, ກວດກາ ກ່ຽວກັບການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ແນໃສ່ເຮັດໃຫ້ວຽກງານດັ່ງກ່າວຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ;
2. ມີບ່ອນອີງທາງດ້ານນິຕິກຳໃນການສ້າງຕັ້ງ ສູນຮັບຝາກຫຼັກຊັບ, ກອງທຶນສ່ວນບຸກຄົນ ແລະ ສະຖາບັນສີກາງດ້ານຫຼັກຊັບອື່ນ ທີ່ຍັງບໍ່ທັນຄົບຖ້ວນ;
3. ເປັນນິຕິກຳ ທີ່ສອດຄ່ອງກັບສະພາບ ແລະ ເງື່ອນໄຂຕົວຈິງພາຍໃນປະເທດ ພ້ອມທັງສອດຄ່ອງກັບຫຼັກການຄຸ້ມຄອງຫຼັກຊັບສາກົນ (IOSCO) ຊຶ່ງຈະນຳໄປສູ່ການກ້າວເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ ພ້ອມທັງເປັນຂໍ້ວຕໍ່ໃຫ້ແກ່ ຄຄຊ ສປປ ລາວ ໃນການຈັດຕັ້ງປະຕິບັດວຽກງານເຊື່ອມໂຍງຕະຫຼາດທຶນໃນຂົງເຂດອາຊຽນ;
4. ຈະຊ່ວຍສ້າງເງື່ອນໄຂສະດວກ ແລະ ສິ່ງຈູງໃຈໃຫ້ບັນດາຫົວໜ່ວຍວິສາຫະກິດ ສາມາດລະດົມທຶນຜ່ານຕະຫຼາດທຶນ ຊຶ່ງຈະເປັນການເພີ່ມສິນຄ້າໃນຕະຫຼາດຫຼັກຊັບໃຫ້ຫຼາຍຂຶ້ນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ປະກອບສ່ວນລົງທຶນໃນຫຼັກຊັບໃຫ້ຫຼາຍຂຶ້ນ. ພ້ອມດຽວກັນນີ້ ຈະເປັນການສ້າງສິ່ງອຳນວຍຄວາມສະດວກໃນການຊື້-ຂາຍຫຼັກຊັບ ໃນຕະຫຼາດຫຼັກຊັບ;
5. ມີກົນໄກ ແລະ ເປັນບ່ອນອີງອັນສຳຄັນໃຫ້ແກ່ການ ປ້ອງກັນ ແລະ ແກ້ໄຂ ການຊື້-ຂາຍຫຼັກຊັບ ແລະ ການກະທຳ ທີ່ບໍ່ຍຸຕິທຳ ຢ່າງຈະແຈ້ງ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ ສ້າງຄວາມເຊື່ອໝັ້ນ ແລະ ດຶງດູດໃຫ້ຜູ້ລົງທຶນທັງ ພາຍໃນ ແລະ ຕ່າງປະເທດ ເຂົ້າມາມີສ່ວນຮ່ວມໃນຂົງເຂດວຽກງານຫຼັກຊັບນັບມື້ນັບຫຼາຍຂຶ້ນ;
6. ລະບົບກົດໝາຍໃນຂົງເຂດການເງິນຂອງ ສປປ ລາວ ຈະມີຄວາມສົມບູນຂຶ້ນກວ່າເກົ່າ ແລະ ປະກອບສ່ວນເຂົ້າໃນການພັດ ທະນາເສດຖະກິດ-ສັງຄົມຂອງຊາດ ຢ່າງຕັ້ງໜ້າ;
7. ເປັນການປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ VIII ປີ 2016 – 2020.

## VI. ທິດທາງໃນການຈັດຕັ້ງປະຕິບັດ ແຕ່ປະຈຸບັນເຖິງ ເດືອນທ້າຍປີ 2019.

ການປັບປຸງກົດໝາຍວ່າດ້ວຍຫຼັກຊັບ ແຕ່ປະຈຸບັນ ເຖິງ ທ້າຍປີ 2019 ຈະໄດ້ດຳເນີນຕາມທິດທາງ ດັ່ງນີ້:

1. ທາບທາມຄຳເຫັນຮ່ວມກັບ ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບ ແລະ ທະນາຄານແຫ່ງ ສປປ ລາວ ໃນພາຍໃນເດືອນ ມີນາ 2019;
2. ທາບທາມຄຳເຫັນເປີດກວ້າງ (ພາກເໜືອ, ພາກກາງ ແລະ ພາກໃຕ້) ໃນພາຍໃນເດືອນ ເມສາ ຫາ ພຶດສະພາ 2019;
3. ສົ່ງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ໃຫ້ກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງ ພາຍໃນເດືອນ ກໍລະກົດ 2019;
4. ສົ່ງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເຂົ້າຜ່ານກອງປະຊຸມລັດຖະບານ ພາຍໃນເດືອນ ສິງຫາ 2019;
5. ສະເໜີຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຕໍ່ຄະນະປະຈຳສະພາແຫ່ງຊາດ ພາຍໃນເດືອນ ກັນຍາ 2019;
6. ສະເໜີຈັດກອງປະຊຸມສຳມະນາເຜີຍແຜ່ກ່ຽວກັບວຽກງານຕະຫຼາດທຶນ ແລະ ກົດໝາຍເປີດກວ້າງ ຮ່ວມກັບ ບັນດາທ່ານສະມາຊິກສະພາແຫ່ງຊາດ ພາຍໃນເດືອນ ກັນຍາ 2019;
7. ພິຈາລະນາຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢູ່ກອງປະຊຸມສະພາແຫ່ງຊາດ ພາຍໃນເດືອນ ຕຸລາ 2019;
8. ຮັບຮອງເອົາຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ສະເໜີກົດໝາຍຕໍ່ປະທານປະເທດ ພາຍໃນເດືອນ ພະຈິກ ຫາ ທັນວາ 2019;
9. ປະທານປະເທດພິຈາລະນາອອກລັດຖະດຳລັດປະກາດໃຊ້ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ພາຍໃນເດືອນ ມັງກອນ 2020;
10. ລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ພາຍໃນເດືອນ ກຸມພາ 2020.

ສຳລັບເນື້ອໃນລະອຽດຂອງແຕ່ລະມາດຕາ ຂອງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແມ່ນໄດ້ແຈກຢາຍໃຫ້ບັນດາທ່ານແລ້ວ, ຮຽນສະເໜີບັນດາທ່ານຄົ້ນຄວ້າ ແລະ ປະກອບຄຳເຫັນຕາມທີ່ເຫັນສົມຄວນ ເພື່ອຈະໄດ້ນຳໄປປັບປຸງ ໃຫ້ຄົບຖ້ວນ ແລະ ສົມບູນຕື່ມ.

ຫວັງຢ່າງຍິ່ງວ່າ ຈະໄດ້ຮັບຄຳເຫັນຊີ້ນຳ ທີ່ມີຄຸນຄ່າ ແລະ ເປັນປະໂຫຍດອັນປະເສີດ ຈາກບັນທ່ານສະມາຊິກລັດຖະບານ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**